ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----=====000====-----

ຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ

ສຳນັກງານ ຄລຕ

ເລກທີ 482/ສຄລຕ

ນະຄອນຫຼວງວຽງຈັນ, ວັນທີ 27 MAR 2012

# ຄູ່ມື
# ກ່ຽວກັບການຂໍອະນຸຍາດສ້າງຕັ້ງບໍລິສັດຫຼັກຊັບ

- ອີງຕາມດຳລັດວ່າດ້ວຍຫຼັກຊັບ ແລະ ຕະຫຼາດຫຼັກຊັບ ສະບັບເລກທີ 225/ນຍ ລົງວັນທີ 24 ພຶດສະພາ 2010;
- ອີງຕາມຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສຳນັກງານຄະນະກຳມະການ ຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ສະບັບເລກທີ 006/ຄລຕ ລົງວັນທີ 08 ກໍລະກົດ 2010;
- ອີງຕາມຂໍ້ຕົກລົງວ່າດ້ວຍລະບຽບກ່ຽວກັບການສ້າງຕັ້ງ ແລະ ເຄື່ອນໄຫວຂອງບໍລິສັດຫຼັກຊັບ ສະບັບເລກທີ 009/ຄລຕ ລົງວັນທີ 21 ກໍລະກົດ 2010.

ພະແນກຄຸ້ມຄອງທຸລະກິດຫຼັກຊັບ ແມ່ນພະແນກໜຶ່ງຂອງສຳນັກງານຄະນະກຳມະການຄຸ້ມຄອງ ຫຼັກຊັບ ແລະ ຕະຫຼາດຫຼັກຊັບ (ສຳນັກງານ ຄລຕ), ຊຶ່ງມີບົດບາດເປັນເສນາທິການຊ່ວຍຄະນະ ສຳນັກງານ ຄລຕ ໃນການຄົ້ນຄວ້າສະເໜີຂໍອະນຸມັດສ້າງຕັ້ງ, ຄຸ້ມຄອງ ແລະ ຕິດຕາມການເຄື່ອນໄຫວ ບໍລິສັດຫຼັກຊັບ.

ຈຸດປະສົງຂອງຄູ່ມືສະບັບນີ້ ແມ່ນເພື່ອອຳນວຍຄວາມສະດວກໃຫ້ພະນັກງານພາຍໃນພະແນກ ໃນການຄົ້ນຄວ້າ ແລະ ນຳສະເໜີການຂໍສ້າງຕັ້ງບໍລິສັດຫຼັກຊັບ ໃຫ້ແກ່ຫົວໜ້າສຳນັກງານ ຄລຕ, ດັ່ງມີ ລາຍລະອຽດລຸ່ມນີ້:

## I. <u>ການພົວພັນ</u>

ບຸກຄົນ ແລະ ນິຕິບຸກຄົນ ທີ່ມີຈຸດປະສົງຢາກສ້າງຕັ້ງບໍລິສັດຫຼັກຊັບ ຕ້ອງເຂົ້າມາພົວພັນສອບຖາມ ລາຍລະອຽດຕ່າງໆ ຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດ (ລະບົບປະຕູດຽວ) ກະຊວງອຸດສາຫະກຳ ແລະ ການຄ້າ. ຫຼັງຈາກນັ້ນ, ຜູ້ທີ່ມີຈຸດປະສົງ ຕ້ອງປະກອບສຳນວນຄຳຮ້ອງ ຕາມແບບຟອມທີ່ ກະຊວງອຸດສາຫະກຳ ແລະ ການຄ້າກຳນົດ

## II. ການຍື່ນສຳນວນຄຳຮ້ອງ

ເມື່ອຜູ້ຂໍສ້າງຕັ້ງ ໄດ້ສຳເລັດການກະກຽມສຳນວນຄຳຮ້ອງຕ່າງໆ ຢ່າງຖືກຕ້ອງ ແລະ ຄົບຖ້ວນ ຕາມກະຊວງອຸດສາຫະກຳ ແລະ ການຄ້າ ກຳນົດແລ້ວ. ຜູ້ຂໍສ້າງຕັ້ງ ຕ້ອງຍື່ນສຳນວນຄຳຮ້ອງດັ່ງກ່າວ ຕໍ່ຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດ (ລະບົບປະຕູດຽວ), ກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອຈະໄດ້ກວດກາ ແລະ ຄົ້ນຄ້ວາເບິ່ງວ່າຄົບຖ້ວນ, ເໝາະສົມ ແລະ ສອດຄ່ອງກັບລະບຽບກົດໝາຍ ກຳນົດອອກໃນປະຈຸບັນ. ຖ້າຫາກວ່າມີບາງເອກະສານຍັງບໍ່ ທັນຄົບຖ້ວນ ຫຼື ຍັງບໍ່ສອດຄ່ອງກັບ ລະບຽບກົດໝາຍ, ຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດ ຈະຕ້ອງໄດ້ຕິດຕໍ່ພົວພັນເຖິງຜູ້ຂໍອະນຸຍາດ ສ້າງຕັ້ງໃຫ້ປັບປຸງເອກະສານຄືນ ເພື່ອໃຫ້ສົມບູນ ແລະ ຄົບຖ້ວນ. ພາຍຫຼັງສຳນວນຄຳຮ້ອງ ຖືກຕ້ອງ ແລະ ຄົບຖ້ວນ ທາງຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ ຈະໄດ້ນຳສົ່ງສຳນວນຄຳຮ້ອງດັ່ງກ່າວ ໃຫ້ສຳນັກງານ ຄລຕ ເພື່ອຄົ້ນຄວ້າພິຈາລະນາໃນການອະນຸຍາດ ສ້າງຕັ້ງບໍລິສັດຫຼັກຊັບ ແລະ ຕ້ອງແຈ້ງຕອບຢ່າງເປັນລາຍລັກອັກສອນໃຫ້ກັບຫ້ອງການເຈົ້າໜ້າທີ່ ທະບຽນວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ ***ພາຍໃນເວລາ 10 ວັນລັດຖະການ***.

ພາຍຫຼັງທີ່ສຳນັກງານ ຄລຕ ໄດ້ຮັບສຳນວນຄຳຮ້ອງໃນການຂໍສ້າງຕັ້ງຕາມແບບຟອມຂອງ ຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ. ສຳນັກງານ ຄລຕ ຕ້ອງກວດກາບັນດາເອກະສານຕ່າງໆວ່າ ຖືກຕ້ອງ ແລະ ຄົບຖ້ວນ ຕາມເງື່ອນໄຂຂອງ ຄລຕ ເຊັ່ນ:

- **<u>ເງື່ອນໄຂການຂໍສ້າງຕັ້ງບໍລິສັດຫຼັກຊັບ</u>**

1. ມີສຳນັກງານ ແລະ ອຸປະກອນຮັບໃຊ້ໃຫ້ແກ່ການດຳເນີນທຸລະກິດຫຼັກຊັບທີ່ເໝາະສົມ ແລະ ທັນສະໄໝ;
2. ມີທຶນຈົດທະບຽນຄົບຖ້ວນ ຕາມປະເພດທຸລະກິດດັ່ງນີ້:

3.1. ການເຄື່ອນໄຫວທຸລະກິດ ເຕັມຮູບແບບ ຕ້ອງມີທຶນຈົດທະບຽນ 100 ຕື້ກີບ ຊຶ່ງສາມາດເຄື່ອນໄຫວທຸລະກິດຄື: ໃຫ້ການຄ້ຳປະກັນການຈຳໜ່າຍຫຼັກຊັບ, ການຄ້າຫຼັກຊັບ, ການເປັນນາຍໜ້າຊື້-ຂາຍຫຼັກຊັບ ແລະ ການໃຫ້ຄຳປຶກສາດ້ານການເງິນກ່ຽວກັບ ຫຼັກຊັບ;

3.2. ການເຄື່ອນໄຫວທຸລະກິດ ບາງປະເພດ ຕ້ອງມີທຶນຈົດທະບຽນ ດັ່ງນີ້:

- ການຄ້າຫຼັກຊັບ ຕ້ອງມີທຶນຈົດທະບຽນ 80 ຕື້ກີບ ຊຶ່ງສາມາດເຄື່ອນໄຫວທຸລະກິດຄື: ການຄ້າຫຼັກຊັບ, ການເປັນນາຍໜ້າຊື້-ຂາຍຫຼັກຊັບ ແລະ ການໃຫ້ຄຳປຶກສາດ້ານການເງິນກ່ຽວກັບຫຼັກຊັບ;
- ການເປັນນາຍໜ້າຊື້-ຂາຍຫຼັກຊັບ ຕ້ອງມີທຶນຈົດທະບຽນ 50 ຕື້ກີບ ສາມາດເຄື່ອນໄຫວທຸລະກິດຄື: ເປັນນາຍໜ້າຊື້-ຂາຍຫຼັກຊັບ ແລະ ໃຫ້ຄຳປຶກສາໂດຍກົງແກ່ນັກລົງທຶນເພື່ອລົງທຶນໃສ່ຫຼັກຊັບ;
- ການໃຫ້ຄຳປຶກສາດ້ານການເງິນກ່ຽວກັບຫຼັກຊັບ ຕ້ອງມີທຶນຈົດທະບຽນ 30 ຕື້ກີບ ຊຶ່ງສາມາດເຄື່ອນໄຫວທຸລະກິດຄື: ໃຫ້ຄຳປຶກສາເພື່ອກະກຽມການອອກ ແລະ ສະເໜີຂາຍຫຼັກຊັບຕໍ່ມວນຊົນ, ໃຫ້ຄຳປຶກສາເພື່ອຈົດທະບຽນໃນຕະຫຼາດຫຼັກຊັບ, ແລະ ໃຫ້ຄຳປຶກສາໂດຍກົງແກ່ນັກລົງທຶນເພື່ອລົງທຶນໃສ່ຫຼັກຊັບ.

3. ຜູ້ບໍລິຫານ ມີຄວາມຮູ້ຄວາມສາມາດ ແລະ ປະສົບການທາງດ້ານທຸລະກິດຫຼັກຊັບ, ການເງິນ-ທະນາຄານ ແລະ ຕ້ອງມີໃບຢັ້ງຢືນວິຊາຊີບທຸລະກິດຫຼັກຊັບທີ່ອອກໃຫ້ໂດຍ ສຳນັກງານ ຄລຕ; ສຳລັບພະນັກງານ ວິຊາການ ຕ້ອງມີໃບຢັ້ງຢືນວິຊາຊີບທຸລະກິດຫຼັກຊັບທີ່ອອກໃຫ້ໂດຍ ສຳນັກງານ ຄລຕ;
4. ມີແຜນທຸລະກິດທີ່ດີສົມເຫດສົມຜົນ;
5. ເງື່ອນໄຂອື່ນໆ ຕາມການກຳນົດຂອງສຳນັກງານ ຄລຕ.

- **ສຳນວນຄຳຮ້ອງຂໍສ້າງຕັ້ງບໍລິສັດຫຼັກຊັບ (ມາດຕາ 28. ຂອງດຳລັດວ່າດ້ວຍຫຼັກຊັບ ແລະ ຕະຫຼາດຫຼັກຊັບ)**

1. ໃບຄຳຮ້ອງຕາມແບບພິມທີ່ສຳນັກງານ ຄລຕ ກຳນົດ;
2. ສັນຍາສ້າງຕັ້ງບໍລິສັດຫຼັກຊັບ;
3. ກົດລະບຽບບໍລິສັດ;
4. ໃບຢັ້ງຢືນວຸດທິການສຶກສາ, ປະສົບການ, ປະຫວັດໃນການດຳເນີນທຸລະກິດ ແລະ ໃບຢັ້ງຢືນນັກວິຊາຊີບທຸລະກິດຫຼັກຊັບຂອງຜູ້ບໍລິຫານ, ແລະ ປະຫວັດຂອງຜູ້ຖືຮຸ້ນລາຍໃຫຍ່;
5. ບັນຊີລາຍຊື່ຂອງຜູ້ຖືຮຸ້ນ ແລະ ອັດຕາສ່ວນການຖືຮຸ້ນ;
6. ໃບຢັ້ງຢືນຖານະການເງິນຂອງຜູ້ຖືຮຸ້ນທີ່ເປັນນິຕິບຸກຄົນ ຊຶ່ງຮັບຮອງໂດຍບໍລິສັດກວດສອບພາຍນອກ, ກໍລະນີເປັນບຸກຄົນ ແມ່ນຕ້ອງມີໃບຢັ້ງຢືນເງິນຝາກ ທີ່ຮັບຮອງໂດຍທະນາຄານກ່ຽວຂ້ອງ;
7. ແຜນການດຳເນີນທຸລະກິດ 3 ປີທຳອິດພາຍຫຼັງການສ້າງຕັ້ງ;
8. ເອກະສານອື່ນໆ ຕາມການກຳນົດຂອງສຳນັກງານ ຄລຕ.

ຖ້າຫາກວ່າມີບາງເອກະສານຍັງບໍ່ ທັນຄົບຖ້ວນ ຫຼື ຍັງບໍ່ສອດຄ່ອງກັບລະບຽບກົດໝາຍ, ສຳນັກງານ ຄລຕ ຈະຕ້ອງໄດ້ຕິດຕໍ່ພົວພັນເຖິງຜູ້ຂໍອະນຸຍາດສ້າງຕັ້ງໃຫ້ປັບປຸງເອກະສານຄືນ ເພື່ອໃຫ້ສົມບູນ ແລະ ຄົບຖ້ວນ.

ເມື່ອໄດ້ຮັບສຳນວນຄຳຮ້ອງຖືກຕ້ອງ ແລະ ຄົບຖ້ວນ ສຳນັກງານ ຄລຕ ຈະພິຈາລະນາແຕ່ລະບັນຫາ ດັ່ງນີ້:

1. ໂຄງສ້າງປະກອບການຈັດຕັ້ງ ແລະ ບຸກຄະລາກອນ
2. ທຶນຈົດທະບຽນໃນການສ້າງຕັ້ງ ແລະ ປະເພດທຸລະກິດຫຼັກຊັບ
3. ພື້ນຖານໂຄງລ່າງຂອງບໍລິສັດ
   - ❖ ດ້ານຕຶກອາຄານ
   - ❖ ດ້ານ IT (Hardware & Software)
   - ❖ ທະນາຄານຕົວແທນໃນການຊຳລະສະສາງ
4. ລະບຽບການເຄື່ອນໄຫວຂອງບໍລິສັດຫຼັກຊັບ
5. ແຜນດຳເນີນທຸລະກິດ

## III. ຂັ້ນຕອນການຄົ້ນຄວ້າ ແລະ ການລາຍງານ

ເມື່ອສຳເລັດການປະກອບເອກະສານຂໍສ້າງຕັ້ງຢ່າງຄົບຖ້ວນ ແລະ ຖືກຕ້ອງແລ້ວ ສຳນັກງານ ຄລຕ ຕ້ອງໄດ້ປະຕິບັດໜ້າທີ່ຕົ້ນຕໍ ດັ່ງນີ້:

1. ຄົ້ນຄວ້າການສະເໜີຄຳເຫັນຂອງຕົນ ກ່ຽວກັບການສະເໜີຂໍສ້າງຕັ້ງບໍລິສັດຫຼັກຊັບດັ່ງກ່າວ ດ້ວຍການລາຍງານເຖິງທ່ານປະທານ ໂດຍຜ່ານການປະກອບຄຳເຫັນຂອງຮອງປະທານ ຄລຕ ຜູ້ປະຈຳການ;
2. ຫຼັງຈາກໄດ້ຮັບທິດຊີ້ນຳຂອງປະທານແລ້ວ, ສຳນັກງານ ຄລຕ ຕ້ອງໄດ້ແຈ້ງເຖິງກະຊວງ ອຸດສາຫະກຳ ແລະ ການຄ້າ ຢ່າງເປັນລາຍລັກອັກສອນ ກ່ຽວກັບການຂໍອະນຸຍາດສ້າງຕັ້ງ ວ່າເຫັນດີ ຫຼື ບໍ່ເຫັນດີໃນການຂໍອະນຸຍາດດັ່ງກ່າວ;
3. ໃນກໍລະນີທີ່ ຄລຕ ເຫັນດີອອກໃບອະນຸຍາດສ້າງຕັ້ງບໍລິສັດຫຼັກຊັບ ໃຫ້ກັບຜູ້ຂໍສ້າງຕັ້ງ ທາງສຳນັກງານ ຄລຕ ກໍ່ຈະໄດ້ອອກໃບອະນຸຍາດໃຫ້ຜູ້ຂໍສ້າງຕັ້ງ ແລະ ແຈ້ງເຖິງກະຊວງ ອຸດສາຫະກຳ ແລະ ການຄ້າ ກ່ຽວກັບການອະນຸຍາດສ້າງຕັ້ງບໍລິສັດຫຼັກຊັບ ວ່າ ***"ເຫັນດີ ໂດຍພື້ນຖານໃນການຂໍອະນຸຍາດສ້າງຕັ້ງບໍລິສັດຫຼັກຊັບ ແຕ່ກ່ອນເລີ່ມຕົ້ນເຄື່ອນໄຫວທຸລະກິດຫຼັກຊັບ ຜູ້ຂໍສ້າງຕັ້ງ ຕ້ອງມີເງື່ອນໄຂໃນການໃຫ້ບໍລິການຄົບຖ້ວນ ຊຶ່ງ ຄລຕ ໃຫ້ເວລາ ໃນການກະກຽມ 6 ເດືອນ ແລະ ຕ້ອງໄດ້ຮັບໃບອະນຸຍາດຈາກ ຄລຕ ເສຍກ່ອນ ຈຶ່ງ ສາມາດເຄື່ອນໄຫວທຸລະກິດໄດ້"***. ຈາກນັ້ນ ທາງກະຊວງອຸດສາຫະກຳ ແລະ ການຄ້າ ກໍ່ ຈະອອກໃບທະບຽນວິສາຫະກິດ ໃຫ້ພາຍໃນ 3 ວັນລັດຖະການ.

## IV. ການພິຈາລະນາຄຳຮ້ອງຂໍສ້າງຕັ້ງ

ຄລຕ ຈະອອກໃບອະນຸຍາດດຳເນີນທຸລະກິດໃຫ້ໄດ້ກໍ່ຕໍ່ເມື່ອ ສຳນັກງານ ຄລຕ ສົມທົບກັບ ພາກສ່ວນທີ່ກ່ຽວຂ້ອງຈະຕ້ອງລົງໄປກວດກາເບິ່ງຄວາມພ້ອມທີ່ຈະເປີດໃຫ້ບໍລິການເຊັ່ນ: ສະຖານທີ່, ພະນັກງານ, ວັດຖຸເຕັກນິກໃນການໃຫ້ບໍລິການ, ລະບົບການບໍລິການຂອງບໍລິສັດຫຼັກຊັບ, ລະບົບ ຮັກສາຄວາມປອດ ໄພ ແລະ ອື່ນໆ ເພື່ອຂຽນລາຍງານກ່ຽວກັບຄວາມພ້ອມຂອງບໍລິສັດຫຼັກຊັບດັ່ງກ່າວ ເຖິງທ່ານປະທານ ຫຼື ຮອງປະທານ ຄລຕ ຜູ້ປະຈຳການ ເພື່ອພິຈາລະນາ.

ສຳນັກງານ ຄລຕ ຈະພິຈາລະນາຄຳຮ້ອງຂໍສ້າງຕັ້ງ ແລະ ແຈ້ງຜົນກ່ຽວກັບການຂໍອະນຸຍາດ ສ້າງຕັ້ງບໍລິສັດຫຼັກຊັບຢ່າງເປັນລາຍລັກອັກສອນ ໃຫ້ແກ່ຜູ້ສະເໜີຂໍສ້າງຕັ້ງຊາບ ພາຍໃນ 10 ວັນ ນັບ ແຕ່ວັນໄດ້ຮັບສຳນວນຄຳຮ້ອງຂໍສ້າງຕັ້ງຢ່າງ ຄົບຖ້ວນ ແລະ ຖືກຕ້ອງເປັນຕົ້ນໄປ.

## V. ການຖອກ ແລະ ນຳໃຊ້ທຶນຈົດທະບຽນ

ຜູ້ຂໍອະນຸຍາດສ້າງຕັ້ງບໍລິສັດຫຼັກຊັບ ຕາມປະເພດທຸລະກິດຫຼັກຊັບ ທີ່ໄດ້ກຳນົດໃນຂໍ້ II ຂອງບົດແນະນຳສະບັບນີ້ ຕ້ອງຖອກທຶນຈົດທະບຽນ ດັ່ງລຸ່ມນີ້:

ຜູ້ທີ່ໄດ້ຮັບອະນຸຍາດສ້າງຕັ້ງບໍລິສັດຫຼັກຊັບ ຕ້ອງຖອກທຶນຈົດທະບຽນໃຫ້ຄົບຖ້ວນ ຫຼື ຕ່ຳສຸດ 30% ຂອງທຶນຈົດທະບຽນທັງໝົດ ເຂົ້າບັນຊີເງິນຝາກຂອງຕົນ ທີ່ເປີດໄວ້ກັບກົມບໍລິການ ທະນາ

ຄານແຫ່ງ ສປປ ລາວ ພາຍໃນກຳນົດ 30 ວັນ ນັບແຕ່ວັນທີ່ໄດ້ຮັບອະນຸຍາດສ້າງຕັ້ງບໍລິສັດຫຼັກຊັບ ຈາກ ຄລຕ ເປັນຕົ້ນໄປ, ສ່ວນທີ່ເຫຼືອ ຕ້ອງຖອກໃຫ້ຄົບຖ້ວນພາຍໃນ ກຳນົດ 1 ປີ.

ຜູ້ທີ່ໄດ້ຮັບອະນຸຍາດສ້າງຕັ້ງບໍລິສັດຫຼັກຊັບ ທີ່ຕ້ອງການນຳໃຊ້ທຶນຈົດທະບຽນເພື່ອນຳໃຊ້ທຶນຈົດທະບຽນເພື່ອກະກຽມຄວາມພ້ອມເຂົ້າໃນການເຄື່ອນໄຫວທຸລະກິດຫຼັກຊັບ ຫຼື ໃນເປົ້າໝາຍອື່ນ ຕ້ອງມີແຜນການນຳໃຊ້ທຶນຢ່າງລະອຽດ ແລະ ຕ້ອງໄດ້ຮັບອະນຸຍາດຈາກສຳນັກງານ ຄລຕ ເສຍກ່ອນ.

## VI. ຄ່າທຳນຽມໃນການຂໍສ້າງຕັ້ງບໍລິສັດຫຼັກຊັບ

ຜູ້ສະເໜີຂໍສ້າງຕັ້ງ ຈະຕ້ອງໄດ້ໄປຊຳລະເງິນຄ່າທຳນຽມການຂໍສ້າງຕັ້ງບໍລິສັດ ຫຼັກຊັບຕາມລະບຽບການ ດັ່ງນີ້:

1. ຄ່າທຳນຽມແບບຟອມ ຂໍສ້າງຕັ້ງບໍລິສັດຫຼັກຊັບ ຈຳນວນ 100,000 ກີບ;
2. ຄ່າທຳນຽມຍື່ນຄຳຮ້ອງຂໍສ້າງຕັ້ງບໍລິສັດຫຼັກຊັບ ຈຳນວນ 15,000,000 ກີບ ທີ່ກົມບໍລິການ ທະນາຄານແຫ່ງ ສປປ ລາວ ເລກບັນຊີຂອງສຳນັກງານ ຄລຕ ຄື: 00.5102800.000010. ພາຍຫຼັງສຳເລັດການຊຳລະເງິນຄ່າທຳນຽມດັ່ງກ່າວແລ້ວ, ຜູ້ຂໍສ້າງຕັ້ງ ຕ້ອງນຳໃບມອບເງິນ 1 ໃບ ມາຢັ້ງຢືນນຳພະແນກຄຸ້ມຄອງ ທຸລະກິດຫຼັກຊັບ.
3. ໃນກໍລະນີ ຜູ້ສະເໜີຂໍສ້າງຕັ້ງບໍລິສັດຫຼັກຊັບ ໄດ້ຮັບອະນຸຍາດສ້າງຕັ້ງບໍລິສັດຫຼັກຊັບ, ຕ້ອງໄດ້ຊຳລະຄ່າທຳນຽມໃບອະນຸຍາດສ້າງຕັ້ງ ຈຳນວນສູນຈຸດສູນໜຶ່ງສ່ວນຮ້ອຍ (0,01%) ຂອງທຶນຈົດທະບຽນທັງໝົດ ແລະ ຕ້ອງຊຳລະເງິນໃນວັນທີ່ໄດ້ຮັບໃບອະນຸຍາດສ້າງຕັ້ງ ໂດຍການໂອນເຂົ້າເລກບັນຊີຂອງ ສຳນັກງານ ຄລຕ ຄື: 00.5102800.000010 ທີ່ກົມບໍລິການ, ທະນາຄານແຫ່ງ ສປປ ລາວ.

ຮອງ ຫົວໜ້າສຳນັກງານ ຄລຕ

ສາຍສະໝອນ ຈັນທະຈັກ